ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 0494 /ທຄຕລ.2025
ນະຄອນຫຼວງວຽງຈັນ, ວັນທີ: 17 FEB 2025

# ແຈ້ງການ

**ເຖິງ:** ບັນດາທ່ານຜູ້ຖືຮຸ້ນ, ນັກລົງທຶນ, ມວນຊົນທົ່ວໄປ ແລະ ບັນດາທ່ານລູກຄ້າຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ທີ່ເຄົາລົບ ແລະ ນັບຖື;

**ເລື່ອງ:** ການແອບອ້າງ ແລະ ປອມແປງເອກະສານທີ່ມີລາຍເຊັນຂອງທ່ານຜູ້ອຳນວຍການ ທຄຕລ.

– ອີງຕາມການແຈ້ງລາຍງານພົບເຫັນເອກະສານທີ່ມີລາຍເຊັນຂອງທ່ານຜູ້ອຳນວຍການ ທຄຕລ ຈາກທ່ານລູກຄ້າ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຜູ້ຖືຮຸ້ນ, ນັກລົງທຶນ, ມວນຊົນທົ່ວໄປ ແລະ ບັນດາທ່ານລູກຄ້າຂອງ ທຄຕລ ຊາບທົ່ວເຖິງກັນວ່າ ທຄຕລ ໄດ້ຮັບການແຈ້ງຈາກລູກຄ້າ ກ່ຽວກັບ ເອກະສານບັດເຊີນທີ່ມີເນື້ອໃນເຊີນເຂົ້າຮ່ວມຮັບລາງວັນ. ພາຍຫຼັງກວດສອບເອກະສານດັ່ງກ່າວແລ້ວ ເຫັນວ່າ: ທຄຕລ ບໍ່ເຄີຍເຮັດບັດເຊີນນີ້ຂຶ້ນແຕ່ຢ່າງໃດ, ເອກະສານດັ່ງກ່າວຖືກປອມແປງຂຶ້ນ ແລະ ເນື້ອໃນຂອງເອກະສານດັ່ງກ່າວ ບໍ່ມີມູນຄວາມຈິງ (ຕົວຢ່າງເອກະສານໄດ້ຄັດຕິດມາພ້ອມນີ້).

ດ້ວຍເຫດນີ້ ທຄຕລ ຈຶ່ງຂໍແຈ້ງໃຫ້ບັນດາ ລູກຄ້າ, ບຸກຄົນ ຫຼື ນິຕິບຸກຄົນ ແລະ ພາກສ່ວນທີ່ໄດ້ຮັບບັດເຊີນດັ່ງກ່າວ ຢ່າຫຼົງເຊື່ອ ແລະ ຮຽກຮ້ອງໃຫ້ ຜູ້ທີ່ມີຂໍ້ມູນ ຫຼື ມີຂໍ້ສົງໄສ ກ່ຽວກັບ ເອກະສານຕ່າງໆຂອງ ທຄຕລ ສາມາດສອບຖາມຄືນ ຫຼື ຕິດຕໍ່ຫາ ທຄຕລ ໄດ້ທຸກໆຊ່ອງທາງການຕິດຕໍ່ ເຊິ່ງພວກເຮົາຍິນດີໃຫ້ການຮ່ວມມືຢ່າງເຕັມທີ່ ແລະ ຈະຊ່ວຍຢັ້ງຢືນຄວາມຖືກຕ້ອງຂອງທຸກໆເອກະສານທີ່ອອກໂດຍ ທຄຕລ.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງບັນດາທ່ານ ເພື່ອຊາບ ໂດຍທົ່ວເຖິງກັນ.

**ຜູ້ອຳນວຍການ ທຄຕລ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC ແຂວງ ນະຄອນຫຼວງວຽງຈັນ ສປປ ລາວ

ນາລິນ ສີລະວົງສິດ